ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ລູກຄ້າ ທີ່ຝາກເງິນຢູ່ທະນາຄານ ລາວກໍ່ສ້າງ ຈະໄດ້ຮັບເງິນຂອງຕົນຄືນ




ຄືດັ່ງທີ່ຮູ້ແລ້ວວ່າ: ໃນທ້າຍປີ 2019 ຜ່ານມາ, ກົມຄຸ້ມຄອງທະນາຄານທຸລະກິດ (ກຄທ) ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ອອກແຈ້ງການໃຫ້ລູກຄ້າເງິນຝາກ ແລະ ເຈົ້າໜີ້ຂອງທະນາຄານລາວກໍ່ສ້າງຈຳກັດເຂົ້າແຈ້ງຂໍ້ມູນເງິນຝາກ ແລະ ໜີ້ສິນຂອງຕົນຢູ່ທະນາຄານລາວກໍ່ສ້າງ ເພື່ອແກ້ໄຂບັນຫາທະນາຄານດັ່ງກ່າວທີ່ຕົກຢູ່ໃນພາວະຂາດສະພາບຄ່ອງ, ຂາດຄວາມໝັ້ນຄົງ, ທຫລ ມີຄວາມຈຳເປັນເຂົ້າຄວບຄຸມເພື່ອແກ້ໄຂບັນຫາດັ່ງກ່າວຕາມລະບຽບກົດໝາຍໄດ້ກຳນົດໄວ້. ສຳລັບຂໍ້ມູນດັ່ງກ່າວສາມາດສະໜອງໃຫ້ແກ່ຄະນະຄວບຄຸມແລ້ວນັບແຕ່ວັນທີ 25 ມັງກອນ 2020 ທີ່ສຳນັກງານທະນາຄານລາວກໍ່ສ້າງຈຳກັດຕັ້ງຢູ່ບ້ານໂພນສີນວນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ. ກໍລະນີທີ່ບໍ່ສາມາດສະໜອງຂໍ້ມູນດ້ວຍຕົນເອງໃຫ້ມີໃບມອບສິດໂດຍມີການຢັ້ງຢືນຈາກອົງການປົກຄອງບ້ານ.

ຕໍ່ບັນຫາດັ່ງກ່າວ; ໃນຕອນເຊົ້າຂອງວັນທີ 12 ກໍລະກົດ 2021 ນີ້, ທ່ານ ອາລຸນ ບຸນຍົງ ຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ທຫລ ໄດ້ເປີດເຜີຍຢ່າງເປັນທາງການຕໍ່ສື່ມວນຊົນພວກເຮົາກ່ຽວກັບການເບີກຈ່າຍເງິນຝາກຂອງລູກຄ້າເງິນຝາກທະນາຄານ ລາວກໍ່ສ້າງຈຳກັດ ໂດຍອີງຕາມຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຄຸ້ມຄອງຊັບສິນ ແລະ ດຳເນີນຄະດີທະນາຄານລາວກໍ່ສ້າງຈຳກັດສະບັບເລກທີ

689/ທຫລ, ລົງວັນທີ 03 ທັນວາ 2020 ແລະ ອີງຕາມຂໍ້ຕົກລົງວ່າດ້ວຍການຈ່າຍຄືນເງິນຝາກໃຫ້ລູກຄ້າເງິນຝາກສະບັບເລກທີ 09/ຄຊ.ທລກ, ລົງວັນທີ 30 ມິຖຸນາ 2021; ປະຈຸບັນ, ທຫລ ກະກຽມການຈ່າຍຄືນເງິນຝາກໃຫ້ແກ່ລູກຄ້າເງິນຝາກທະນາຄານລາວກໍ່ສ້າງຈໍາກັດ. ສໍາລັບການຈ່າຍຄືນເງິນຝາກແມ່ນອີງຕາມຈໍານວນເງິນຕົວຈິງທີ່ສາມາດເກັບກູ້ຊັບສິນຂອງທະນາຄານຮອດປະຈຸບັນໂດຍການນໍາໃຊ້ຖານຕົວເລກເງິນຝາກຮອດມື້ທີ່ທະນາຄານດັ່ງກ່າວຖືກຄວບຄຸມໃນວັນທີ 22 ພະຈິກ 2019 ໂດຍຈະຈ່າຍຕົ້ນທຶນກ່ອນ 80% ດ້ວຍການໂອນຊໍາລະຄືນເຂົ້າບັນຊີເງິນຝາກຂອງລູກຄ້າທະນາຄານລາວກໍ່ສ້າງ ຈໍາກັດ ທີ່ເປີດໄວ້ຢູ່ທະນາຄານທຸລະກິດຂອງລັດ (ທະນາຄານການຄ້າຕ່າງປະເທດລາວມະຫາຊົນ, ທະນາຄານພັດທະນາລາວ ແລະ ທະນາຄານສົ່ງເສີມກະສິກໍາ), ສ່ວນທີ່ເຫຼືອແມ່ນຈະໄດ້ເບີກຈ່າຍເພີ່ມຕື່ມພາຍຫຼັງທີ່ສານໄດ້ຕັດສິນ ແລະ ການປະຕິບັດຕາມຄໍາຕັດສິນຂອງສານ.

ທ່ານຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ທຫລ ຮຽກຮ້ອງມາຍັງລູກຄ້າເງິນຝາກຂອງທະນາຄານລາວກໍ່ສ້າງຈໍາກັດປະຕິບັດຄື: 1. ສໍາລັບລູກຄ້າເງິນຝາກຂອງທະນາຄານລາວກໍ່ສ້າງ ຈໍາກັດ ທີ່ມີບັນຊີເງິນຝາກເປີດໄວ້ຢູ່ທະນາຄານທຸລະກິດຂອງລັດແລ້ວກໍ່ໃຫ້ໄປສະໜອງຂໍ້ມູນເງິນຝາກຂອງຕົນ ແລະ ປະກອບເອກະສານໃນການເບີກຈ່າຍເງິນຕາມການແນະນໍາຂອງຄະນະຮັບຜິດຊອບຢູ່ທະນາຄານລາວກໍ່ສ້າງຈໍາກັດ (ພ້ອມກັນນັ້ນໃຫ້ກຽມເອກະສານເພື່ອມາຢັ້ງຢືນຄວາມຖືກຕ້ອງຂອງເງິນຝາກຄື: ປຶ້ມບັນຊີເງິນຝາກ, ບັດປະຈໍາໂຕ, ໜັງສືຜ່ານແດນຫຼືປຶ້ມສໍາມະໂນຄົວ). 2. ສໍາລັບລູກຄ້າເງິນຝາກຂອງທະນາຄານລາວກໍ່ສ້າງຈໍາກັດທີ່ຍັງບໍ່ທັນໄດ້ເປີດບັນຊີນໍາທະນາຄານທຸລະກິດຂອງລັດກໍ່ໃຫ້ໄປເປີດບັນຊີເງິນຝາກນໍາທະນາຄານທຸລະກິດຂອງລັດໂດຍແຈ້ງຈຸດປະສົງຂອງການເປີດບັນຊີແມ່ນເພື່ອຮອງຮັບການຊໍາລະຄືນເງິນຝາກຂອງຕົນທີ່ໄດ້ຝາກໄວ້ນໍາທະນາຄານລາວກໍ່ສ້າງຈໍາກັດ. 3. ໃຫ້ລູກຄ້າເງິນຝາກຂອງທະນາຄານລາວກໍ່ສ້າງຈໍາກັດໄປສະໜອງຂໍ້ມູນເງິນຝາກຂອງຕົນທີ່ທະນາຄານ ລາວກໍ່ສ້າງຈໍາກັດດັ່ງທີ່ໄດ້ກໍານົດໄວ້ໃນຂໍ້ 1 ຂ້າງເທິງນັບແຕ່ວັນທີ 12 - 30 ກໍລະກົດ 2021.

ທ່ານ ອາລຸນ ບຸນຍົງ ຢືນຢັນວ່າ: ການເບີກຈ່າຍເງິນຄືນແມ່ນ ທຫລ ຈະໂອນເງິນ ຜ່ານທະນາຄານທຸລະກິດລັດ 3 ແຫ່ງ ເພື່ອເຂົ້າບັນຊີເງິນຝາກຂອງລູກຄ້າພ້ອມກັນທັງໝົດຕາມຂໍ້ມູນທີ່ລູກຄ້າມາແຈ້ງໄວ້ກັບຄະນະຮັບຜິດຊອບ ແລະ ຈະຈ່າຍໃຫ້ສໍາເລັດພາຍຫຼັງທີ່ລູກຄ້າມາແຈ້ງຂໍ້ມູນຄົບຖ້ວນຊຶ່ງຈະໃຫ້ສໍາເລັດພາຍໃນເດືອນສິງຫາ 2021 ນີ້; ຫາກລູກຄ້າທີ່ຝາກເງິນຢູ່ທະນາຄານລາວກໍ່ສ້າງ ຈໍາກັດ ທີ່ຕ້ອງການຂໍ້ມູນເພີ່ມຕື່ມກະລຸນາໂທຕິດຕໍ່ມາຍັງຄະນະຮັບຜິດຊອບການເບີກຈ່າຍເງິນຝາກຂອງລູກຄ້າເງິນຝາກທະນາຄານລາວກໍ່ສ້າງຈໍາກັດໄດ້ທີ່ເບີໂທລະສັບ 030 9336690; 030 9338065; 030 9335094 ຕາມໂມງລັດຖະການ ແລະ ຂໍໃຫ້ທຸກທ່ານຈົ່ງປະຕິບັດຕາມມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ຢ່າງເຂັ້ມງວດ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ໃຊ້ເງິນກີບທົ່ວທັງຊາດສ້າງປົດບາດຄ່າເງິນກີບລາວ